# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 6 ສິງຫາ 2017 (8-6-2017)

---

## ຂອງຂວັນແຫ່ງພຣະຄຸນ

***ຖ້າທ່ານໄດ້ສິດໃຫ້ເລືອກເອົາສິ່ງຂອງອັນໃດອັນນຶ່ງເພື່ອໃຊ້ຕລອດຊີວິດ, ແມ່ນຫຍັງຄືສິ່ງນັ້ນ?***

**ຈຸດສຳຄັນໃນບົດຮຽນ***:* ຂ້ອຍສາມາດປະເຊີນໜ້າຕໍ່ທຸກສິ່ງໃນຊີວິດໄດ້ໂດຍຜ່ານພຣະຄຸນຂອງພຣະເຈົ້າ .

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ພວກເຮົາສາມາດມີສິ່ງດີໆຢ່າງມາກມາຍໄດ້ບໍ່? ຄຳຕອບກໍຄື ໄດ້ແທ້ ຖ້າພວກເຮົາຫາກເວົ້າເຣື່ອງຂອງເລັກໆນ້ອຍໆເຊັ່ນ ກະແລັມ, ກາເຟ, ຫຼືວ່າເຄື່ອງຂີ່ທີ່ຂຶ້ນໆ ລົງໆອັນຫວາດສຽວແລະຕື່ນເຕັ້ນເຫຼົ່ານັ້ນ. ແຕ່ວ່າມີອີກສິ່ງນຶ່ງທີ່ພວກເຮົາສາມາດໃຊ້ໄດ້ຢ່າງບໍ່ໝົດຈັກເທື່ອນັ້ນກໍຄື: ພຣະຄຸນ.

ສິ່ງນຶ່ງທີ່ບໍ່ມີຂອບເຂດຈຳກັດແລະມີໄວ້ສຳລັບພວກເຮົານັ້ນກໍແມ່ນພຣະຄຸນ ຊຶ່ງສາມາດຮັບເອົາໄດ້ຢ່າງເຕັມສ່ວນ. ມີພຽງແຕ່ວ່າພວກເຮົາບໍ່ຄ່ອຍຄຳນຶງເຖິງ. ເມື່ອຊີວິດຂອງພວກເຮົາຫາກລຸ່ງໄຫຼໄປດີ ສ່ວນຫຼາຍພວກເຮົາກໍຈະຢຸດພັກຊຶມໃນສິ່ງເຫຼົ່ານັ້ນທີ່ເບິ່ງເໝືອນວ່າມັນເຮັດໃຫ້ຊີວິດຍິ່ງໃຫຍ່ສຳຄັນ. ແຕ່ວ່າເມື່ອບັນຫາຂອງຊີວິດກະແທກຕຳໃສ່ສ່ວນປະກອບຕ່າງໆຂອງຊີວິດພວກເຮົາແລ້ວນັ້ນ, ແມ່ນຫຍັງທີ່ເຫຼືອຢູ່? ພຣະຄຸນ. ພຣະຄຸນຍັງຢູ່ທີ່ນັ້ນ. ພຣະຄຸນຂອງພຣະເຈົ້າໄດ້ຢູ່ທີ່ນັ້ນຕລອດເວລາ, ແຕ່ວ່າພວກເຮົາໄດ້ກາຍເປັນຄົນທີ່ຂາດພິກໄຫວທີ່ຈະຄຳນຶງເຖິງ-ພຣະຄຸນ.

ບໍ່ມີຜູ້ໃດທີ່ໄດ້ພົບກັບພຣະຄຸນຂອງພຣະເຈົ້າໂດຍບັງເອີນເມື່ອພວກເຂົາຍັງໝົກໝົ້ນກັບຄວາມສຳເຣັດແລະມັ່ງຄັ້ງສົມບູນດີ. ແຕ່ເຂົາເຈົ້າຈະຄິດເຖິງພຣະຄຸນ ເມື່ອພວກເຂົາຕົກອັບແລະຂາດເຂີນໝົດຫົນທາງ ຈາກສະພາບການດັ່ງກ່າວຈຶ່ງເຮັດໃຫ້ພວກເຂົາເຂົ້າໃຈແລະມີປະສົບການກັບພຣະຄຸນຂອງພຣະເຈົ້າ.

ຊີວິດອັຄສາວົກໂປໂລເປັນຕົວຢ່າງຂອງການຄຳນຶງເຖິງພຣະຄຸນ. ເພິ່ນໄດ້ປະເຊີນກັບການທ້າທາຍຫຼາຍຢ່າງແລະເວລາອັນຫຍຸ້ງຍາກຫຼາຍປະການ, ແຕ່ວ່າເພິ່ນໄດ້ພົບກັບພລັງອັນຍິ່ງໃຫຍ່ໃນພຣະຄຸນທີ່ພຣະເຈົ້າໄດ້ຖອກເທໃສ່ໃນຊີວິດຂອງເພິ່ນ.

**ພຣະຄັມພີກ່າວວ່າຢ່າງໃດ?** ( ເບິ່ງຕາມຂໍ້ 1, 2 ແລະ 3 )

**ສຶກສາພຣະຄັມພີ**

**1. <u>2 ໂກຣິນໂທ 12:2-7ກ:</u>**

*2ແຕ່ສິບສີ່ປີມາແລ້ວເຮົາຮູ້ຈັກຄຣິສະຕຽນຜູ້ນຶ່ງ ຜູ້ນັ້ນໄດ້ຖືກຮັບຂຶ້ນໄປເຖິງສວັນຊັ້ນສາມ (ແຕ່ຈະໄປທັງກາຍຫຼືນອກ*
*ກາຍເຮົາກໍບໍ່ຮູ້ ພຣະເຈົ້າເທົ່ານັ້ນເປັນຜູ້ຊົງຊາບ) 3ເຮົາຮູ້ຈັກວ່າຄົນນັ້ນໄດ້ຮັບຂຶ້ນໄປເຖິງທີ່ສຸກຂະເສີມ (ແຕ່ຈະໄປທັງ*
*ກາຍຫຼືນອກກາຍເຮົາກໍບໍ່ຮູ້ ພຣະເຈົ້າເທົ່ານັ້ນເປັນຜູ້ຊົງຊາບ) 4ຄົນນັ້ນໄດ້ຍິນສຽງທີ່ຈະກ່າວອອກເປັນຄຳບໍ່ໄດ້ ແລະ*
*ເປັນສິ່ງທີ່ຫ້າມມະນຸດບໍ່ໃຫ້ເປີດເຜີຍ. 5ສຳລັບຄົນຜູ້ນັ້ນແຫຼະ, ເຮົາອວດໄດ້ ແຕ່ສຳລັບເຮົາເອງຈະບໍ່ອວດຕົວ ເວັ້ນແຕ່*
*ຈະອວດໃນຄວາມອ່ອນແຮງຂອງເຮົາ. 6ເພາະເຖິງແມ່ນວ່າເຮົາຢາກອວດຕົວ ເຮົາກໍບໍ່ເປັນຄົນໂງ່ ເພາະເຮົາກ່າວຕາມ*
*ຄວາມຈິງ ແຕ່ເຮົາອົດກັ້ນໄວ້ ກໍເພາະຢ້ານວ່າຈະມີບາງຄົນຍົກຍ້ອງເຮົາເກີນກວ່າທີ່ເຂົາໄດ້ຮູ້ຈາກການເຫັນແລະຟັງ*
*ເຮົານັ້ນ. 7ແລະເພື່ອບໍ່ໃຫ້ເຮົາຍົກຍ້ອງຕົວຈົນເກີນໄປເນື່ອງຈາກການຊົງສຳແດງອັນຫຼວງຫຼາຍຊຶ່ງມາຈາກພຣະເຈົ້າ...*

ດົນປານໃດແລ້ວທີ່ເປັນຄັ້ງສຸດທ້າຍທີ່ທ່ານໄດ້ເຄີຍປະສົບກັບຄວາມຊົມຊື່ນຍິນດີອັນແທ້ຈິງໃນພຣະຄຣິດ, ບໍ່ແມ່ນຄວາມມ່ວນຊື່ນໃນຊ່ວງເວລາອັນສັ້ນໆ? ດົນປານໃດແລ້ວທີ່ເປັນຄັ້ງສຸດທ້າຍທີ່ທ່ານມີຈິດໃຈເຕັມດ້ວຍຄວາມຮູ້ບຸນຄຸນ ບໍ່ແມ່ນການຮ້ອງຂໍຢາກໄດ້ສິ່ງໃດສິ່ງນຶ່ງໃນຄຳອ້ອນວອນອະທິຖານ, ແຕ່ແມ່ນການໃຊ້ເວລາທັງໝົດໃນການຂອບພຣະຄຸນແລະສັຣເສີນ? ດົນປານໃດແລ້ວທີ່ເປັນຄັ້ງສຸດທ້າຍທີ່ທ່ານໄດ້ຮ້ອງເພງເໝືອນກັບຜູ້ຂຽນພຣະທັມເພງສັຣເສີນບົດທີ 103:1 ແລະ 51:10?

ນອກຈາກພຣະຄຸນຂອງພຣະເຈົ້າແລ້ວ, ພວກເຮົາຈະບໍ່ເຄີຍຮູ້ຈັກຄວາມຊົມຊື່ນຍິນດີ, ຄວາມຮູ້ບຸນຄຸນ, ຫຼືຄຳສັຣເສີນ. ນອກຈາກພຣະຄຸນຂອງພຣະເຈົ້າແລ້ວ, ພວກເຮົາຈະບໍ່ສາມາດປະສົບກັບຄວາມຊົມຊື່ນຍິນດີອັນຍາວນານແລະແທ້ຈິງໃນພຣະຄຣິດ. ແທນທີ່ຈະເປັນຢ່າງນັ້ນພວກເຮົາກໍຈະຊອກຫາຄວາມຊາງຊື້ງຕ່ໆໄປຢ່າງບໍ່ມີວັນຈົບສິ້ນ ຈົນເຖິງຈຸດຈົບຂອງພວກເຮົາເອງ. ນອກຈາກພຣະຄຸນຂອງພຣະເຈົ້າແລ້ວ, ຄວາມໂລບມາກໂລພາກໍຈະເຕັມຢູ່ໃນຫົວໃຈຂອງພວກເຮົາ, ເປັນເຫດໃຫ້ພວກເຮົາໄປເອົາຂອງຄົນອື່ນແທນທີ່ຈະເອົາໃຫ້ຈາກຄວາມສົມບູນໃນພຣະຄຣິດ.

ສຸດທ້າຍ, ນອກຈາກພຣະຄຸນຂອງພຣະເຈົ້າແລ້ວ, ພວກເຮົາກໍຈະຊອກຫາທາງຕ່າງໆຢ່າງບໍ່ມີວັນຢຸດເພື່ອລະງັບຄວາມຮູ້ສຶກຜິດຂອງພວກເຮົາແລະການປິ່ນປົວຮັກສາຄວາມເປິະເປື້ອນໃນຄວາມນຶກຄິດຂອງພວກເຮົາ, ແທນທີ່ຈະຍິນດີແລະສະແດງອອກເຖິງຄວາມຮູ້ບຸນຄຸນເພາະພຣະເຢຊູໄດ້ກ່າວວ່າ, “ສຳເຣັດແລ້ວ" (ໂຢຮັນ 19:30). ທ່ານສາມາດສລຸບປະສົບການຂອງທ່ານໂປໂລໃນພຣະຄຳວັກນີ້ຢ່າງໃດ?

ນອກຈາກພຣະຄຸນຂອງພຣະເຈົ້າແລ້ວ, ທ່ານໂປໂລຈະບໍ່ສາມາດປະສົບກັບນິມິດຕ່າງໆແລະການເປີດເຜີຍສິ່ງທີ່ເພິ່ນໄດ້ບັນລະຍາຍໃນ 2 ໂກຣິນໂທ 12. ໃນຕອນນີ້, ພວກຄຣູສອນປອມ ໄດ້ພະຍາຍາມໂນ້ມນ້າວຄຣິສຕະຈັກໃນເມືອງໂກຣິນໂທໃຫ້ຕິດຕາມພວກເຂົາໃນພື້ນຖານຂອງການອ້າງອີງເຖິງນິມິດຂອງພວກເຂົາເອງ ແລະການເປີດເຜີຍຂອງພຣະຜູ້ເປັນເຈົ້າ (ເບິ່ງ 2 ໂກຣິນໂທ 11:4-14). ທ່ານໂປໂລໄດ້ໂຕ້ຕອບໂດຍການແບ່ງປັນປະສົບການສ່ວນຕົວກັບນິມິດແລະການເປີດເຜີຍຕ່າງໆ. ເພິ່ນປະຕິເສດໃນການອວດອ້າງເຖິງປະສົບການອັນອັສຈັນຂອງເພິ່ນ ຊຶ່ງເປັນກຽດແລະເປັນພຣະພອນທີ່ເພິ່ນນໄດ້ຮັບຈາກພຣະເຈົ້າ. ຄວາມຈິງແລ້ວ, ທ່ານໄດ້ກ່າວເຖິງປະສົບການນັ້ນໃນນາມຂອງຜູ້ອື່ນ ເໝືອນກັບວ່າເພິ່ນເວົ້າກ່ຽວກັບຄົນອື່ນພຸ້ນ.

ທ່ານໂປໂລໄດ້ເລືອກເອົາທາງທີ່ບໍ່ໃຫ້ລາຍລະອຽດເພີ້ມເຕີມໃນສິ່ງທີ່ເພິ່ນໄດ້ຍິນ; ຊຶ່ງເປັນໂອກາດສ່ວນຕົວລະຫວ່າງຕົວເພິ່ນເອງແລະອົງພຣະຜູ້ເປັນເຈົ້າ. ໃນການເຮັດແນວນັ້ນ, ທ່ານໂປໂລໄດ້ສະແດງໃຫ້ຄຣິສຕະຈັກເມືອງໂກຣິນໂທໄດ້ເຫັນວ່າປະສົບການຢ່າງນັ້ນບໍ່ແມ່ນຈະເກີດຂຶ້ນກັບຜູ້ທີ່ເຊື່ອທັງໝົດ. ນີ້ແມ່ນກໍຣະນີພິເສດທີ່ຄົນອື່ນບໍ່ຄວນຫວັງທີ່ຈະມີປະສົບການຕໍ່ພຣະພັກພຣະເຈົ້າ ສາມາດໃຊ້ປະສົບການເຫຼົ່ານັ້ນສຳລັບການຮັບໃຊ້ພຣະເຈົ້າ.

ແນ່ນອນ, ພວກເຮົາຄວນຊົມຊື່ນຍິນດີຕໍ່ເຫດການໂອກາດອັນພິເສດນັ້ນໆ ເພາະໂອກາດເຫຼົ່ານັ້ນໄດ້ດູດດຶງພວກເຮົາເຂົ້າສູ່ບ່ອນສະຖິດຢູ່ຂອງພຣະເຈົ້າ. ແຕ່ວ່າພຣະຄຸນຂອງພຣະເຈົ້າມາເຖິງພວກເຮົາໃນທາງອື່ນອີກ. ຄວາມຈິງແລ້ວ, ພວກເຮົາຈະໄດ້ພົບໃນຕອນຕໍ່ໄປ, ຊຶ່ງຈະເປັນຕົວຢ່າງຂອງປະສົບການໃນພຣະຄຸນຂອງພຣະເຈົ້າໂດຍຜ່ານຄວາມຫຍຸ້ງຍາກລຳບາກ.

| |
|---|
| *ເປັນດ້ວຍເຫດໃດຄວາມອວດຕົວຈຶ່ງເປັນການທົດລອງທີ່ມີພລັງແລະອັນຕະລາຍຜູ້ຕິດຕາມພຣະຄຣິດ?* |

## 2. <u>2 ໂກຣິນໂທ 12:7ຂ-8:</u>

*[7]...ພຣະເຈົ້າໄດ້ຊົງບັນດານໃຫ້ມີສ້ຽນໜາມໃນເນື້ອກາຍຂອງເຮົາ ເປັນບໍຣິວານຂອງຊາຕານທີ່ທຸບຕີເຮົາ ເພື່ອບໍ່ໃຫ້ເຮົາຍົກຍ້ອງຕົວຈົນເກີນໄປ. [8] ເຣື່ອງສິ່ງນັ້ນເຮົາໄດ້ອ້ອນວອນທູນຂໍອົງພຣະຜູ້ເປັນເຈົ້າເຖິງສາມເທື່ອ ໃຫ້ມັນພົ້ນໄປຈາກເຮົາ*

ຄວາມອວດຕົວເປັນເລື່ອງທີ່ແປຍາກ. ວັດຈະນານຸກົມພາສາອັງກິດໄດ້ກ່າວວ່າ ”ແມ່ນຄວາມຮູ້ສຶກທີ່ທ່ານນັບຖືຕົວເອງແລະສະສົມໄວ້ໃຫ້ຄົນອື່ນໄດ້ນັບຖື” ແລະ “ແມ່ນຄວາມຮູ້ສຶກທີ່ທ່ານໃຫ້ຄວາມສຳຄັນແກ່ຕົນເອງຫຼາຍກວ່າຫຼືດີກວ່າຄົນອື່ນໆ.” ພາກຕົ້ນນັ້ນເປັນສ່ວນບວກ(ດີ), ຂະນະທີ່ພາກທີສອງມີທັງສອງຄືສ່ວນລົບແລະສິ່ງບໍ່ດີ, ເປັນພິເສດແມ່ນໃນຄວາມສຳພັນ.

ສະນັ້ນ, ພວກເຮົາຈະສາມາດເອົາຕົວຂອງພວກເຮົາອອກຈາກພາກສ່ວນທີ່ຜິດຂອງຄວາມອວດຕົວໄດ້ແນວໃດ? ພວກເຮົາຈະຫຼີກລ້ຽງຈາກຄວາມອວດຕົວທີ່ຈະຄວບຄຸມຫົວໃຈຂອງພວກເຮົາ ແລະຊຶມເຂົ້າໃນຈິດວິນຍານຂອງພວກເຮົາໃນທາງລົບໄດ້ແນວໃດ? ສຳລັບທ່ານໂປໂລເອງ, ພຣະເຈົ້າໄດ້ໃຊ້ “ສ້ຽນໜາມໃນເນື້ອກາຍ,” ຊຶ່ງເພິ່ນໄດ້ເອີ້ນວ່າ “ຕົວແທນຂອງຊາຕານ.” ທ່ານໂປໂລບໍ່ໄດ້ໃຫ້ລາຍລະອຽດເພີ້ມເຕີມກ່ຽວກັບຄວາມແຫຼມຄົມ, ຄວາມເຈັບປວດແລະຍືດເຍື້ອຍາວນານອັນນີ້ໃນຊີວິດຂອງເພິ່ນ. ສ້ຽນໜາມນີ້ອາດຈະແມ່ນຄູ່ຕໍ່ສູ້ຂອງເພິ່ນຫຼືການກົດຂີ່ຂົ່ມເຫັງທີ່ເພິ່ນໄດ້ອົດທົນມານານແລ້ວ, ແຕ່ວ່ານັກສາສນາສາດເຊື່ອວ່າຕ້ອງແມ່ນອາການຝ່າຍຮ່າງກາຍອັນໃດອັນນຶ່ງ ຊຶ່ງອາດຈະແມ່ນຕາຫຼືບັນຫາຂອງຫູຈົນເຖິງພຍາດໄຂ້ປ່າ. ພວກເຮົາບໍ່ສາມາດຮູ້ໄດ້. ຈະແມ່ນຫຍັງກໍແລ້ວແຕ່, ສ້ຽນໜາມອັນນີ້ເຮັດໃຫ້ການຮັບໃຊ້ພຣະເຈົ້າຂອງເພິ່ນມີຄວາມຍາກລຳບາກໃນຄາວນັ້ນ (ເບິ່ງຄາລາເຕັຽ 4:13-14), ເຖິງປານນັ້ນກໍຍັງເຮັດໃຫ້ທ່ານໂປໂລຖ່ອມຕົວລົງຕໍ່ພຣະພັກພຣະເຈົ້າ. ດັ່ງນັ້ນ, ສ້ຽນໜາມໃນເນື້ອໜັງຂອງໂປໂລໄດ້ນຳສິ່ງດີໆ ມາສູ່ຊີວິດຂອງເພິ່ນ.

ເປັນການຍາກທີ່ຈະສຳນຶກໄດ້ວ່າດິນກຳລັງເຈື່ອນອອກຈາກພື້ນຖານກ້ອງຕົວທ່ານ. ເມື່ອທ່ານ “ຕົກຕ່ຳ” ຫ້າປີກ່ອນຈະເຖິງການອອກກິນເບັ້ຽບຳນານ, ຫຼືລູກເຕົ້າກະບົດບໍ່ຟັງຄວາມ, ຫຼືເຕົາໄຟແລະເຕົ້ານ້ຳຮ້ອນຂອງທ່ານເພໃນເດືອນດຽວກັນ, ມັນຍາກໃນການທີ່ຈະເຫັນພຣະເຈົ້າຈະໃຊ້ສິ່ງນີ້ສຳລັບການດີແກ່ພຣະອົງ. ແຕ່ວ່າພຣະອົງຊົງກະທຳ. ພຣະອົງກະທຳສເມີ ( ໂຣມ 8:28 ). ທ່ານອາດຈະບໍ່ເຫັນຜົນຢ່າງກະທັນຫັນ, ແຕ່ພຣະເຈົ້າ, ໃນການຊົງປະທານໃຫ້ແລະອຳນາດສູງສຸດຂອງພຣະອົງ, ຈະເສີມພລັງໃຫ້ທ່ານໃນຄາວຍາກລຳບາກເຫຼົ່ານີ້. ພຣະອົງຊົງເດີນກັບພວກເຮົາ ແລະຊົງເລົ້າໂລມພວກເຮົາ. ນັ້ນຄືພຣະຄຸນ.

ພຣະເຈົ້າອະນຸຍາດໃຫ້ພວກເຮົາຜ່ານຜ່າຄວາມຍາກລຳບາກເພາະວ່າພຣະອົງມີແຜນການແລະປະສົງກະທຳບາງຢ່າງໃນຊີວິດພວກເຮົາ. ພຣະອົງປະສົງກຳຈັດຄວາມອວດຕົວອອກຈາກຫົວໃຈຂອງພວກເຮົາ ແລະເອົາຄວາມຮັກ, ຄວາມເມດຕາປານີ, ແລະຄວາມດີຂອງພຣະອົງໃສ່ແທນ. ດັ່ງນັ້ນເມື່ອທ່ານປະເຊີນກັບຄວາມຍາກລຳບາກ, ຈົ່ງຖ່ອມຕົວລົງຕໍ່ພຣະເຈົ້າແລະເອົາໃຈໃສ່ຕໍ່ສິ່ງທີ່ພຣະເຈົ້າກຳລັງກະທຳໃນຖ້າມກາງຄວາມຍາກລຳບາກຂອງທ່ານນັ້ນ.

| |
|---|
| ມີຫຍັງອີກແດ່ທີ່ເປັນທາງໂຕ້ຕອບອັນເໝາະສົມ ເມື່ອພຣະເຈົ້າຕັສບອກວ່າ “ບໍ່” ຕໍ່ຄຳອະທິຖານຂອງທ່ານ? |

## 3. 2 ໂກຣິນໂທ 12:9-10:

*9 ແຕ່ພຣະອົງຊົງກ່າວແກ່ເຮົາວ່າ, “ການທີ່ເຈົ້າມີຄຸນຈາກເຮົາ ກໍພໍສຳລັບເຈົ້າແລ້ວ ດ້ວຍວ່າຄວາມອ່ອນແອມີຢູ່ທີ່ໃດ*
*ເດດຂອງເຮົາກໍມີຣິດຂຶ້ນເຕັມຂນາດຢູ່ທີ່ນັ້ນ” ເຫດສັນນັ້ນເຮົາຈຶ່ງມີຄວາມພາກພູມໃຈໃນບັນດາຄວາມອ່ອນແອຂອງ*
*ເຮົາດີກວ່າ ເພື່ອຣິດເດດຂອງພຣະຄຣິດຈະບັງຣົ່ມເຮົາໄວ້. 10 ສັນນັ້ນ ເພາະເຫັນແກ່ພຣະຄຣິດເຮົາຈຶ່ງຊື່ນໃຈໃນບັນດາ*
*ຄວາມອ່ອນແອ ໃນການຖືກໝິ່ນປມາດ ໃນຄວາມຍາກລຳບາກ ໃນການຖືກຂົ່ມເຫັງ ແລະໃນຄວາມຍາກຈົນ ເພາະ*
*ວ່າເຮົາອ່ອນແອເມື່ອໃດ ເຮົາກໍຈະແຂງແຮງເມື່ອນັ້ນ.*

ຕາມທັມມະຊາດແລ້ວພວກເຮົາມີຄວາມກຽດຊັງຄວາມເຈັບປ່ວຍ. ເຖິງປານນັ້ນຄວາມເຈັບປ່ວຍສາມາດເປັນສິ່ງທີ່ດີ. ແມ່ນແລ້ວ, ຄວາມປ່ວຍມັນເຈັບປວດ. ແຕ່ວ່າມັນກໍເປັນເຄື່ອງໝາຍທີ່ຊີ້ບອກໃຫ້ຮູ້ວ່າຮ່າງກາຍຂອງພວກເຮົາຍັງທຳງານຢ່າງປົກກະຕິຂອງລະດັບເນື້ອໜັງຮ່າງກາຍ. ທາງລະດັບຂອງຝ່າຍວິນຍານ, ຄວາມເຈັບປ່ວຍກໍສາມາດແກວ່ງພວກເຮົາໃສ່ອ້ອມແຂນຂອງພຣະເຈົ້າໄດ້ເຊັ່ນກັນ. ເມື່ອພວກເຮົາປະສົບກັບຄວາມເຈັບຂອງຄວາມຍາກລຳບາກ ເຖິງແມ່ນວ່າຈະເປັນຄວາມຜິດຂອງພວກເຮົາຫຼືບໍ່ກໍຕາມ ພວກເຮົາຄົ້ນພົບວ່າພຣະເຈົ້າບໍ່ເຄີຍປະລະພວກເຮົາ (ເບິ່ງເຮັບເຣີ

13:5). ຄວາມຈິງແລ້ວ, ພຣະເຈົ້າໄດ້ໃຊ້ຄວາມເຈັບຂອງຄວາມຍາກລຳບາກເພື່ອເຕືອນສະຕິຂອງພວກເຮົາ ແລະເປີດເຜີຍພຣະຄຸນແລະການຊົງສະຖິດຢູ່ດ້ວຍກັບພວກເຮົາ. ນອກຈາກສິ່ງເຫລົ່ານັ້ນແລ້ວ, ເມື່ອທ່ານໂປໂລໄດ້ຫັນຄືນຫາພຣະເຈົ້າແລະໄດ້ຍອມຈຳນົນສາລະພາບທູນຂໍໃຫ້ພຣະອົງກຳຈັດ "ສຽນໜາມຂອງເນື້ອກາຍ," ອົງພຣະຜູ້ເປັນເຈົ້າໄດ້ຕອບວ່າ, "ການທີ່ເຈົ້າມີພຣະຄຸນຈາກເຮົາ ກໍພໍສຳລັບເຈົ້າແລ້ວ, ດ້ວຍວ່າຄວາມອ່ອນແອມີຢູ່ທີ່ໃດ ເດດຂອງເຮົາກໍມີຣິດຂຶ້ນເຕັມຂນາດຢູ່ທີ່ນັ້ນ."

ພຣະຄຸນຂອງພຣະເຈົ້າແມ່ນພຽງພໍຢູ່ສເມີ. ເມື່ອທ່ານເຂົ້າສູ່ຄວາມຍາກລຳບາກ, ພຣະຄຸນອັນດຽວກັນນີ້ແຫຼະທີ່ໄດ້ສະຖິດຢູ່ກັບພຣະເຢຊູ (ເບິ່ງລູກາ 2:40) ແລະສະຖິດຢູ່ກັບທ່ານ, ຂະນະທີ່ພຣະຄຸນແລະຄວາມຈິງມາຈາກພຣະຄຣິດ (ເບິ່ງ ໂຢຮັນ 1:17). ທ່ານໄດ້ຮັບຄວາມລອດພົ້ນໂດຍທາງພຣະຄຸນຂອງພຣະເຢຊູ, ແລະພຣະຄຸນຂອງພຣະອົງກໍສາມາດກໍ່ສ້າງທ່ານຂຶ້ນໃນທຸກໆກໍຣະນີ.

ຜົນທີ່ຕາມມາກໍຄື, ແທນທີ່ຈະໂອ້ອວດເຖິງກຳລັງຂອງທ່ານເອງ. ທ່ານຄວນອວດອ້າງເຖິງຄວາມອ່ອນແອກໍຈະດີແລະຖືກກວ່າ. ທ່ານໂປໂລໄດ້ມາເຖິງຈຸດສລຸບນີ້ "ສັນນັ້ນ ເພາະເຫັນແກ່ພຣະຄຣິດເຮົາຈຶ່ງຊື່ນໃຈໃນບັນດາຄວາມອ່ອນແອ ໃນການຖືກໝິ່ນປມາດ ໃນຄວາມຍາກລຳບາກ ໃນການຖືກຂົ່ມເຫັງ ແລະໃນຄວາມຍາກຈົນ ເພາະວ່າເຮົາອ່ອນແອເມື່ອໃດ ເຮົາກໍຈະແຂງແຮງເມື່ອນັ້ນ." ອັນນີ້ບໍ່ແມ່ນຄວາມຖ່ອມຕົວທີ່ຜິດ, ເມື່ອມີຄົນນຶ່ງເວົ້າວ່າ, "ຄວາມອ່ອນແອອັນຍິ່ງໃຫຍ່ຂອງຂ້າພະເຈົ້ານັ້ນຄືສິ່ງທີ່ຂ້າພະເຈົ້າເປັນຫ່ວງທີ່ສຸດ." ຈຶ່ງເຫັນວ່າ ພຣະຄຳວັກນີ້ຕັກເຕືອນທ່ານໃຫ້ຮັບຄວາມຍາກລຳບາກຕ່າງໆເມື່ອພວກມັນມາປະທະ ເພາະວ່າພຣະເຈົ້າປະສົງທີ່ຈະສ້ອມແປງທ່ານຜ່ານພວກມັນ ແລະໃຊ້ຄວາມຍາກລຳບາກເພື່ອເຮັດໃຫ້ທ່ານເຂັ້ມແຂງຂຶ້ນໃນພຣະອົງ.

ເວົ້າອີກຢ່າງນຶ່ງ, ໂດຍຜ່ານການຊ່ວຍເຫຼືອຂອງພຣະເຈົ້າທີ່ມາຈາກພຣະຄຸນຂອງພຣະອົງ, ພຣະອົງຈະປະທານພລັງແກ່ທ່ານໃຫ້ອົດທົນຕໍ່ທຸກໆສິ່ງ. ຢ່າປະຕິເສດຣິດອຳນາດຕໍ່ຂອງປະທານທີ່ອັສຈັນອັນນີ້.

| |
|---|
| ແມ່ນຫຍັງຄືພາບຕົວຈິງທີ່ໃຫ້ເຫັນເຊັ່ນ ຍິນດີຕໍ່ຄວາມອ່ອນແອ, ໝິ່ນປມາດ, ຄວາມຍາກລຳບາກ, ການກົດຂີ່ຂົ່ມເຫັງ, ແລະຄວາມຫຍຸ້ງຍາກ? |

## ນຳໃຊ້ໃນຊີວິດ:

ຄວາມຈິງແຫ່ງພຣະຄຸນຂອງພຣະເຈົ້າຈະມີຜົນກະທົບຕໍ່ການກະທຳແລະກິຣິຍາຂອງທ່ານຢ່າງໃດໃນອາທິດນີ້? ໃຫ້ພິຈາຣະນາຕາມຄຳແນະນຳຕໍ່ລົງໄປນີ້:

- **ຂອບພຣະຄຸນພຣະເຈົ້າສຳລັບພຣະຄຸນ.** ຈັບຈຸດຄວາມຍາກລຳບາກທີ່ທ່ານກຳລັງປະສົບຢູ່. ຂອບຄຸນພຣະເຈົ້າສຳລັບການຊົງສະຖິດຢູ່ນຳຂອງພຣະອົງໃນຖ້າມກາງບັນຫາຂອງທ່ານແລະທວງຖາມພຣະອົງສຳລັບພລັງທີ່ຈະກ້າວຕໍ່ໄປ.
- **ສແວງຫາພຣະຄຸນ.** ຄຶດທົບທວນຄືນຫຼັງຕໍ່ຄວາມຍາກລຳບາກຜ່ານມາທີ່ທ່ານໄດ້ອົດກັ້ນມານານ. ຈົດບັນທຶກເປັນລຳດັບໃນທາງທີ່ແຕກຕ່າງກັນທີ່ພຣະເຈົ້າໄດ້ສຳແດງພຣະຄຸນຂອງພຣະອົງໃນເວລາເຫຼົ່ານັ້ນ.
- **ແບ່ງປັນພຣະຄຸນ.** ອະທິຖານສຳລັບໂອກາດທີ່ຈະຮັບໃຊ້ຊຶ່ງເປັນເຄື່ອງມືຂອງພຣະຄຸນໃຫ້ແກ່ຊີວິດຂອງບາງຄົນໃນອາທິດນີ້. ທວງຖາມພຣະເຈົ້າໃຫ້ໃຊ້ທ່ານໃນທາງທີ່ສຳແດງໃຫ້ເຫັນພຣະຄຸນຂອງພຣະອົງຕໍ່ຄົນທີ່ຢູ່ອ້ອມຮອບທ່ານ.

ມີຂອງດີຫຼາຍໂພດບໍ່? ແຕ່ສຳລັບພຣະເຈົ້າ ຍັງບໍ່ພໍເທື່ອ. ພຣະຄຸນຂອງພຣະອົງແມ່ນພຽງພໍແລ້ວສຳລັບທ່ານ. ພຣະຄຸນຂອງພຣະອົງອະນຸຍາດໃຫ້ທ່ານປະເຊີນກັບທຸກສິ່ງໄດ້ແລະທຸກໆສິ່ງສຸມໃສ່ທ່ານ. ດັ່ງນັ້ນຈຶ່ງເດີນຕໍ່ໄປຢ່າງໝັ້ນໃຈ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA**